Disability Rights WASHINGTON
Washington's protection and advocacy system

# ໃບແຈ້ງການຂອງການຕົກລົງຄະດີ
# ການຟ້ອງຄະດີເປັນກຸ່ມທີ່ຖືກວາງອອກມາ[1]

## ການຟ້ອງຄະດີ *AB v DSHS* (*"Trueblood"*) ແມ່ນຫຍັງ?

ຈຳເລີຍອາດສະຍາກັມທຸກໆຄົນມີສິດທິຕາມກົດຣັຖທະທັມມະນູນທີ່ຈະບໍ່ຖືກນຳຂຶ້ນສານຕໍ່ສູ້ຄະດີນອກຈາກວ່າເຂົາເຈົ້າສາມາດທີ່ຈະຊ່ວຍເຫລືອໄດ້ໃນການຕໍ່ສູ້ຄະດີຂອງເຂົາເຈົ້າເອງ, ຊຶ່ງຈະຖືກເອີ້ນໂດຍທົ່ວໄປວ່າແມ່ນ " ຄວາມສາມາດ. " ຖ້າຫາກວ່າມັນມີຄວາມສົງສັຍໃນຄວາມສາມາດ, ສານຈະອອກຄຳສັ່ງໃຫ້ມີການຕີຣາຄາເບິ່ງເພື່ອຈະພິຈາຣະນາເບິ່ງຄວາມສາມາດຂອງຈຳເລີຍ. ຖ້າຫາກວ່າການຕີຣາຄາພົບວ່າຈຳເລີຍບໍ່ມີຄວາມສາມາດ, ສານຈະອອກໃບຄຳສັ່ງໃຫ້ເຂົາເຈົ້າໃຫ້ມີ " ການບໍຣິການສຳລັບການສ້ອມແຊມ " ເພື່ອວ່າຈະສ້ອມແຊມຄວາມສາມາດໃຫ້ດີຄືນ.

*A.B. by and through Trueblood et. al. v Washington State DSHS*, No. 14-cv-1178 MJP (*"Trueblood"*) ເປັນການຟ້ອງຄະດີເປັນກຸ່ມທີ່ຈະບັງຄັບໃຊ້ສິດທິຕາມກົດຣັຖທະທັມມະນູນຂອງບຸກຄົນທີ່ຈະໄດ້ຮັບການຕີຣາຄາເບິ່ງຄວາມສາມາດ ແລະ ການບໍຣິການສຳລັບການສ້ອມແຊມພາຍໃນຂອບເຂດເວລາອັນເຈາະຈົງ. ໃນປີ 2015, ສານຢູ່ໃນ *Trueblood* ໄດ້ສັ່ງໃຫ້ກົມ Department of Social and Health Services (DSHS) ຂອງຣັດວໍຊິງຕັນທີ່ຈະສະເນີເອົາການບໍຣິການເຫລົ່ານີ້ໃຫ້ພາຍໃນ 7 ຫລື 14 ວັນ. ກົມບໍ່ໄດ້ເຮັດຕາມຂອບເຂດເວລາຂອງສານ.

## ແມ່ນໃຜແດ່ຖືກສະທ້ອນເຖິງໂດຍການຕົກລາງຄະດີອັນນີ້?

ຢູ່ໃນ *Trueblood*, ສະມາຊິກກຸ່ມແມ່ນທຸກໆຄົນຜູ້ທີ່ດຽວນີ້ເປັນ, ຫລື ຈະກາຍເປັນໃນອະນາຄົດ, ຖືກຟ້ອງກ່າວຫາດ້ວຍຄະດີອາດສະຍາກັມຢູ່ໃນຣັດວໍຊິງຕັນ ແລະ: (a) ຜູ້ທີ່ຖືກສັ່ງໂດຍສານໃຫ້ໄດ້ຮັບການຕີຣາຄາເບິ່ງຄວາມສາມາດ ຫລື ການບໍຣິການສ້ອມແຊມໃຫ້ດີຄືນໂດຍຜ່ານກົມDSHS ຂອງຣັດວໍຊິງຕັນ; (b) ຜູ້ທີ່ກຳລັງລໍຖ້າຢູ່ໃນຄຸກສຳລັບການບໍຣິການອັນນີ້;ແລະ (c) ສຳລັບຜູ້ທີ່ກົມ DSHS ໄດ້ຮັບໃບຄຳສັ່ງຈາກສານ. ທຸກໆພາກສ່ວນຮັບຮູ້ວ່າການຕົກລົງຄະດີໃຫມ່ອັນນີ້ຈະຍັງຄ້າຍຄືວ່າຈະສະທ້ອນເຖິງບຸກຄົນຜູ້ທີ່ເປັນສະມາຊິກຂອງກຸ່ມໃນອະດີດຜ່ານມາ ຫລື ຜູ້ທີ່ກຳລັງຢູ່ໃນອັນຕະຣາຍທີ່ຈະກາຍເປັນສະມາຊິກຂອງກຸ່ມ.

## ການຕົກລົງຄະດີທີ່ຖືກວາງອອກມາແມ່ນຫຍັງ?

ໃນເດືອນແຈນຢູຣີຂອງປີ 2018, ທຸກໆພາກຢູ່ໃນ *Trueblood*
ໄດ້ຕົກລົງກັນວ່າຈະເຮັດວຽກຮ່ວມກັນເພື່ອຈະຊອກຫາຊ່ອງທາງທີ່ມີແນວຄິດກໍ່ສ້າງເພື່ອຈະແກ້ໄຂບັນຫາ.
ພາກສ່ວນໄດ້ໃຊ້ເວລາຫລາຍໆເດືອນເວົ້າລົມນຳຜູ້ທີ່ມີຜົນປະໂຍດຮ່ວມກັນ, ລວມທັງສະມາຊິກຂອງກຸ່ມ ແລະ ຜູ້ສະນັບສະນູນຊ່ວຍເຫລືອຂອງເຂົາເຈົ້າ, ແລະ ໄດ້ບັນລຸການຕົກລົງຄະດີກັນໄດ້ແລ້ວດຽວນີ້,ທີ່ຂໍນຳການອະນຸມັດຈາກສານ. ການຕົກລົງກັນບົ່ງໃຫ້ຣັດທີ່ຈະປະຕິບັດການໃສ່ຫ້າຂະແນງສຳຄັນ, ທີ່ຖືກບັນຣະຍາຍຢູ່ຂ້າງລຸ່ມນີ້.

1. **ການຕີຣາຄາເບິ່ງຄວາມສາມາດ:** ຂະຍາຍອອກໄປຄວາມສາມາດຂອງຜູ້ຕີຣາຄາໃນການວິຈັຍເບິ່ງ ແລະ ໃຊ້ຣະບົບຂໍ້ມູນທີ່ຖືກແກ້ໄຂດີຂຶ້ນ.
2. **ການສ້ອມແຊມຄວາມສາມາດໃຫ້ດີຂຶ້ນ:** ລຸດຜ່ອນຈຳນວນຄົນຜູ້ທີ່ຖືກສັ່ງໃຫ້ມີການບໍຣິການສ້ອມແຊມໃຫ້ດີຂຶ້ນ, ໃຊ້ໂຄງການສ້ອມແຊມໃຫ້ດີຂຶ້ນທີ່ບໍ່ຕ້ອງນອນໂຮງຫມໍດ້ວຍການອູ້ມຊູຢູ່ຕາມເຮືອນ ແລະ ການບໍຣິການຄວບຄຸມເບິ່ງນຳ, ແລະ ເພີ້ມປະຣິມານໃສ່ການບໍຣິການສ້ອມແຊມທີ່ມີຢູ່ໃນປັດຈຸບັນ. ສະຖານທີ່ສ້ອມແຊມສຳຮອງຈະຖືກປິດລົງເປັນຣະຍະໄປ.
3. **ການກັ່ນເບິ່ງພາວະສຸກເສີນແລະການອູ້ມຊູການແຈກແຍກອອກໄປ:** ຂະຍາຍໂຄງການຊຶ່ງໃນນັ້ນຕຳຣວດ ແລະ ຜູ້ປິ່ນປົວສຸຂະພາບໂຣກຈິດຈະເຮັດວຽກຮ່ວມກັນ, ຂະຍາຍຫນ່ວຍທີມງານຕອບໂຕ້ຕໍ່ພາວະສຸກເສີນເຄື່ອນທີ່, ເພີ້ມຂຶ້ນ ແລະ ເຮັດໃຫ້ດີຂຶ້ນໃນການກັ່ນເບິ່ງພາວະສຸກເສີນ ແລະ ການເຮັດໃຫ້ມີການທຸ່ມທ່ຽງ, ແລະ ເອົາການອູ້ມຊູຢູ່ຕາມເຮືອນໃຫ້ ແລະ ການບໍຣິການຄວບຄຸມເບິ່ງນຳສຳລັບບຸກຄົນບາງຄົນຜູ້ທີ່ກ່ຽວພັນຢູ່ໃນຣະບົບເຫລົ່ານີ້.
4. **ການສຶກສາແລະການຝຶກຝົນ:** ຂະຍາຍການຝຶກຝົນເຣື່ອງພາວະສຸກເສີນກ່ຽວກັບສຸຂະພາບການປະພຶດສຳລັບຜູ້ແຈກຍາຍຂ່າວສຸກເສີນ, ເຈົ້າຫນ້າທີ່ດັດສ້າງຢູ່ຄຸກ, ແລະ ຕຳຣວດ, ແລະ ເອົາການຝຶກຝົນ ແລະ ຄວາມຊ່ວຍເຫລືອໃຫ້ຄຸກກ່ຽວກັບບັນຫາທີ່ສະທ້ອນເຖິງສະມາຊິກກຸ່ມ.
5. **ການພັດທະນາຄົນທຳງານ:** ພັດທະນາການໃຊ້ຜູ້ຊ່ຽວຊານການອູ້ມຊູຫມູ່ເພື່ອນ ແລະ ເຮັດວຽກນຳສະຖາບັນການສຶກສາເພື່ອຈະສອດຄ່ອງນຳຄວາມຕ້ອງການດ້ານຄົນທຳງານ ແລະ ການຝຶກຝົນຂອງຣະບົບສຸຂະພາບໂຣກຈິດໃຫ້ດີຂຶ້ນກວ່າເກົ່າ.

ການປ່ຽນແປງທີ່ຖືກບັນຣະຍາຍຢູ່ໃນໃບສັນຍາຕົກລົງຈະຖືກວາງໃຊ້ເປັນຂັ້ນຕອນໄປຢູ່ໃນທ້ອງຖິ່ນຕ່າງໆຂອງຣັດ. ຂັ້ນຕອນທຳອິດຈະລວມເອົາທ້ອງຖິ່ນ Pierce, Southwest, ແລະ Spokane. ຂັ້ນຕອນທີສອງຈະແມ່ນທ້ອງຖິ່ນ King. ການເລີ້ມຕົ້ນໃຊ້ຂອງຂັ້ນຕອນທີສາມຈະຖືກພິຈາຣະນາເບິ່ງໃນພາຍຫລັງ. ໃບສັນຍາຕົກລົງຍັງຈະກໍ່ຕັ້ງອີກຄືກັນຣະບົບທີ່ຈະກຳກັບເບິ່ງນຳສິ່ງທີ່ຣັດກຳລັງເຮັດຢູ່ ແລະ ເພື່ອຈະໃຫ້ແນ່ໃຈວ່າການປ່ຽນແປງຈະເຮັດວຽກໄດ້ດີ.

## ແມ່ນໃຜເປັນຕົວແທນກຸ່ມສະມາຊິກ?

ທະນາຍຄວາມຜູ້ທີ່ເປັນຕົວແທນກຸ່ມສະມາຊິກ ("ທະນາຍຄວາມຂອງກຸ່ມ") ແມ່ນ David Carlson, Kimberly Mosolf, ແລະ Alexa Polaski ຈາກ Disability Rights Washington (DRW), 315 5th Ave. S., Seattle, WA 98104, ແລະ Christopher Carney ຈາກ Carney Gillespie Isitt PLLP, 600 1st Ave., Ste. LL08, Seattle, WA 98104.

## ທາງເລືອກຂອງທ່ານມີຫຍັງແດ່?

ດຽວນີ້ທ່ານມີໂອກາດທີ່ຈະກວດເບິ່ງໃບສັນຍາຕົກລົງຄືນໂດຍທ່ານເອງ ແລະ ບອກໃຫ້ສານຮູ້ຈັກນຳວ່າທ່ານຄິດແນວໃດ. ສານຈະເຮັດການຟັງເຣື່ອງເພື່ອຄວາມເປັນທັມເປີດໃຫ້ສາທາຣະນາຊົນເຂົ້າຮ່ວມນຳ, ໃນ_________________, ຢູ່ໃນສານຂອງຣັດຖະບານກາງຕັ້ງຢູ່ທີ່ **700 Stewart Street, Seattle WA 98101** ຊຶ່ງໃນເວລານັ້ນ ສານຈະພິຈາຣະນາເບິ່ງຄວາມເຫັນທີ່ສານໄດ້ຮັບຈາກປະຊາຊົນຜູ້ທີ່ສົນໃຈໃນໃບສັນຍາຕົກລົງ, ເຊັ່ນຕົວທ່ານເອງ. ແລ້ວສານຈະທຳການຕັດສິນຂັ້ນສຸດທ້າຍກ່ຽວກັບວ່າໃບສັນຍາຕົກລົງຈະຍຸຕິທັມ, ເຫມາະສົມ, ແລະ ດີພຽງພໍ ຫລື ບໍ່. ໃບໂກປີຂອງໃບສັນຍາຕົກລົງ ແລະ ຣາຍຣະອຽດທີ່ໃຊ້ການໄດ້ດີອື່ນໆຈະມີຢູ່ທີ່ **www.disabilityrights.org/Trueblood** ຫລື ວ່າທ່ານຈະຮ້ອງຂໍເອົາໃບສັນຍາໄດ້ໂດຍການຕິດຕໍ່ຫາ DRW. ***ທ່ານຈະອອກຄວາມເຫັນໃສ່ສັນຍາຕົກລົງຄະດີໄດ້ໂດຍການສົ່ງໃບຄວາມເຫັນໄປຫາ DRW ກ່ອນ__________. ຄວາມເຫັນໄປຫາ DRW ຈະຕ້ອງຖືກສົ່ງເຂົ້າມາໂດຍທາງໄປສະນີ, ອີແມລ໌ ຫລື ທາງອື່ນໆ.*** ຄວາມເຫັນທີ່ຖືກເອົາໃຫ້ຈະຖືກຍື່ນໄປຫາສານກ່ອນຫນ້າການຟັງເຣື່ອງເພື່ອຄວາມເປັນທັມໃນເດືອນອົກໂຕເບີ 30th .

## ທ່ານຈະໄດ້ຮັບຣາຍຣະອຽດເພີ້ມເຕີມໄດ້ແນວໃດ?

ໄປທີ່ **www.disabilityrightswa.org/Trueblood** ຫລືຕິດຕໍ່ຫາ Disability Rights Washington ໂດຍ
ໄປສະນີ: Disability Rights Washington, 315 5th Ave. S., Seattle, WA 98104
ໂດຍອີແມລ໌ ຫລື ໂທຣະສັບ: Trueblood@dr-wa.org, (206) 324-1521, ເລກໂທຟຣີ (800) 562-2702. DRW ຮັບເອົາສາຍໂທຮັບຈ່າຍຄ່າໂທໃຫ້ຈາກຄຸກ.

[1] ອັນນີ້ແມ່ນໃບແຈ້ງການໂຈະລໍຖ້າຄຳຕັດສິນຈາກສານທີ່ຖືກວາງອອກມາໃສ່ການຮ້ອງຂໍເອົາການອະນຸມັດຂັ້ນຕົ້ນໃນສັນຍາຕົກລົງຄະດີ.

Declaration of Kimberly Mosolf
Exhibit B - Page 1 of 1

LA